ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ                    ເລກທີ 1641 /ອຄ. ທຄວ

ນະຄອນຫຼວງວຽງຈັນ, ວັນທີ 11 ກັນຍາ 2014

# ບົດແນະນຳ

## ກ່ຽວກັບການສ້າງຕັ້ງສາຂາຂອງວິສາຫະກິດ (ນິຕິບຸກຄົນ) ຢູ່ ສປປ ລາວ

- ອີງໃສ່ມາດຕາ 40 ຂອງກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ), ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;

ເພື່ອໃຫ້ການສ້າງຕັ້ງສາຂາ ຂອງວິສາຫະກິດ (ນິຕິບຸກຄົນ) ຢູ່ ສປປ ລາວ ເປັນໄປຕາມບົດບັນຍັດຂອງກົດໝາຍວ່າດ້ວຍວິສາຫະກິດ, ສະກັດກັ້ນຊ່ອງຫວ່າງ ຈາກການສວຍໃຊ້ການສ້າງຕັ້ງສາຂາ ຮູບແບບຕ່າງໆ. ກະຊວງອຸດສາຫະກຳ ແລະ ການຄ້າ ອອກບົດແນະນຳລະອຽດເພີ່ມເຕີມ ກ່ຽວກັບການສ້າງຕັ້ງ ແລະ ການເຄື່ອນໄຫວສາຂາຂອງວິສາຫະກິດ (ນິຕິບຸກຄົນ) ດັ່ງນີ້ :

ກ. ຫຼັກການທົ່ວໄປກ່ຽວກັບສາຂາຂອງວິສາຫະກິດ (ນິຕິບຸກຄົນ)

1. ສາຂາຂອງວິສາຫະກິດ (ນິຕິບຸກຄົນ) ແມ່ນສ່ວນໜຶ່ງໃນໂຄງປະກອບທຸລະກິດຂອງວິສາຫະກິດທີ່ສ້າງຕັ້ງສາຂານັ້ນໆ (ຕໍ່ໄປເອີ້ນຫຍໍ້ວ່າ : ວິສາຫະກິດແມ່) ບໍ່ມີຖານະນິຕິບຸກຄົນ ແຍກຕ່າງຫາກຈາກວິສາຫະກິດ ທີ່ສ້າງຕັ້ງສາຂາດັ່ງກ່າວ;

2. ວິສາຫະກິດແມ່ ຕ້ອງຮັບຜິດຊອບຕໍ່ທຸກການກະທຳຂອງສາຂາຂອງຕົນ ເໝືອນກັບການກະທຳຂອງຕົນເອງ ໝາຍວ່າການຮ້ອງຟ້ອງສາຂາຂອງນິຕິບຸກຄົນພາຍໃນ ຫລື ຕ່າງປະເທດ ຢູ່ ສປປ ລາວ ໃຫ້ຖືວ່າເປັນການຮ້ອງຟ້ອງນິຕິບຸກຄົນນັ້ນ ເວັ້ນເສັຍແຕ່ການກະທຳທີ່ລະບຽບ ກົດໝາຍກຳນົດເປັນຢ່າງອື່ນ ;

3. ການເຄື່ອນໄຫວຂອງສາຂາ ຕ້ອງຢູ່ໃນຂອບເຂດທີ່ວິສາຫະກິດແມ່ມອບໝາຍໃຫ້ ແລະ ການມອບໝາຍນີ້ ຕ້ອງເຮັດເປັນລາຍລັກອັກສອນ ແລະ ຕ້ອງບໍ່ເກີນຂອບເຂດສິດ ໜ້າທີ່ຂອງວິສາຫະກິດແມ່ ຫລື ຂອບເຂດ ທີ່ລະບຽບກົດໝາຍ ກຳນົດໄວ້ເປັນຢ່າງອື່ນ ເຊັ່ນ ທຸລະກິດ ຫລື ອາຊີບສະຫງວນ ສຳລັບພົນລະເມືອງລາວ ເປັນຕົ້ນ.

ຂ. ການສ້າງຕັ້ງສາຂາຂອງວິສາຫະກິດ (ນິຕິບຸກຄົນ) ພາຍໃນປະເທດ

1. ເງື່ອນໄຂການສ້າງຕັ້ງສາຂາຂອງວິສາຫະກິດ (ນິຕິບຸກຄົນ) ພາຍໃນປະເທດ ມີດັ່ງນີ້:

- ຕ້ອງປະຕິບັດສອດຄ່ອງ ກັບຂໍ້ກຳນົດ ຕາມທີ່ກ່າວມາໃນ ຂໍ້ ກ ຖັດເທິງນີ້;
- ຕ້ອງບໍ່ສ່ວຍໃຊ້ຮູບການ ການຄ້າຂາຍຕໍ່ (Reseller) ຕົວແທນຈຳໜ່າຍ (Trading Agent), ແຟຣນໄຈສ໌ (Franchise) ຫລື ຮູບການການຄ້າອື່ນ ເພື່ອແອບອ້າງສະເໜີສ້າງເປັນສາຂາຂອງຕົນ;
- ສຳລັບສາຂາທີ່ເຮັດທຸລະກິດ ໃນກິດຈະການທີ່ນອນໃນບັນຊີປະເພດທຸລະກິດຄວບຄຸມຫລື ກິດຈະການທີ່ລະບຽບກົດໝາຍກຳນົດໄວ້ຢ່າງອື່ນ ຕ້ອງໄດ້ຮັບຄຳເຫັນດີຈາກຂະແໜງການກ່ຽວຂ້ອງກ່ອນ;
- ຕ້ອງແມ່ນພົນລະເມືອງລາວເທົ່ານັ້ນ ທີ່ເປັນພະນັກງານຢູ່ໃນສາຂາຂອງວິສາຫະກິດ ທີ່ເຮັດທຸລະກິດສະຫງວນສຳລັບພົນລະເມືອງລາວ ;
- ສຳລັບສາຂາ ທີ່ເຮັດທຸລະກິດຫຼາຍກິດຈະການ ຊຶ່ງໃນນັ້ນມີກິດຈະການທີ່ເປັນທຸລະກິດສະຫງວນສຳລັບພົນລະເມືອງລາວ ປະກອບຢູ່ດ້ວຍນັ້ນ ພະນັກງານຂອງສາຂາທັງໝົດ ຕ້ອງແມ່ນພົນລະເມືອງລາວ. ໃນກໍລະນີມີຄວາມຈຳເປັນ ນຳໃຊ້ຄົນຕ່າງປະເທດ ເຮັດວຽກປະກອບໃນສາຂາ (ຍົກເວັ້ນເປັນຄະນະສາຂາ) ເຊັ່ນ ຜູ້ຊ່ຽວຊານ ຕ້ອງປະກອບເອກະສານເປັນລາຍລັກອັກສອນກ່ຽວກັບເປົ້າໝາຍຂອງການນຳໃຊ້ ພ້ອມຊີວະປະຫວັດຫຍໍ້ ແລະ ສຳເນົາໜັງສືຜ່ານແດນ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ເພື່ອພິຈາລະນາ ຕາມຂັ້ນຕອນ;

ການນຳໃຊ້ພະນັກງານ ບັນຈຸໃນກົງຈັກຂອງສາຂາ ທີ່ເປັນຄົນຕ່າງປະເທດ ສຳລັບສາຂາທີ່ເຮັດທຸລະກິດອື່ນ ນອກຈາກທີ່ກ່າວມາໃນຂີດໜຍໍ້ໜ້າ 4 ແລະ 5 ເທິງນີ້ ຕ້ອງປະຕິບັດຢ່າງເຂັ້ມງວດຕາມກົດໝາຍແຮງງານ.

2. ຂັ້ນຕອນ ແລະ ເອກະສານຄຳຮ້ອງສ້າງຕັ້ງສາຂາ ຂອງວິສາຫະກິດ (ນິຕິບຸກ) ຄົນພາຍໃນ

ສາຂາ ຂອງວິສາຫະກິດ (ນິຕິບຸກ) ຄົນພາຍໃນ ຈະສ້າງຕັ້ງຂຶ້ນໄດ້ ກໍ່ຕໍ່ເມື່ອໄດ້ລະບຸກ່ຽວກັບສາຂາດັ່ງກ່າວ ໄວ້ໃນໃບທະບຽນວິສາຫະກິດວິສາຫະກິດ ຂອງວິສາຫະກິດແມ່. ເອກະສານປະກອບໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ເປັນບ່ອນອີງເພື່ອພິຈາລະນາລະບຸສາຂາໄວ້ໃນໃບທະບຽນວິສາຫະກິດນັ້ນ ມີດັ່ງນີ້:

- ໃບມອບສິດ, ຄວາມຮັບຜິດຊອບ ລວມທັງທຶນ (ທຶນຄົງທີ່ ແລະ ທຶນໝູນວຽນ) ທີ່ວິສາຫະກິດແມ່ມອບໃຫ້ສາຂາ ເຊັນໂດຍຜູ້ອຳນວຍການ ຫລື ຜູ້ຈັດການ ຂອງວິສາຫະກິດແມ່;
- ບັນຊີຈຳນວນພະນັກງານຂອງສາຂາ ເຊັນໂດຍຜູ້ອຳນວຍການ ຫລື ຜູ້ຈັດການ ຂອງວິສາຫະກິດແມ່ ໃນນີ້ປະກອບດ້ວຍ: ຊື່ ແລະ ນາມສະກຸນ, ສັນຊາດ, ຕຳແໜ່ງ (ຖ້າເປັນຄະນະສາຂາ) ພ້ອມສຳເນົາບັດປະຈຳຕົວຂອງແຕ່ລະຄົນ, ໃນກໍລະນີຈ້າງຄົນຕ່າງປະເທດ ຕ້ອງປະຕິບັດໃຫ້ສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງ;
- ໃບຢັ້ງຢືນທີ່ຕັ້ງສຳນັກງານສາຂາ.

ກ່ອນສາຂາຈະເຄື່ອນໄຫວທຸລະກິດ ຕ້ອງແຈ້ງໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດຢູ່ບ່ອນທີ່ກ່ຽວຂ້ອງຊາບເພື່ອ: 1) ລົງທະບຽນ; 2) ອອກໃບຢັ້ງຢືນການລົງທະບຽນສ້າງຕັ້ງສາຂາຂອງວິສາຫະກິດ; 3) ອອກໃບອະນຸຍາດສ້ວດຕາປະທັບໃຫ້ສາຂາ ແລະ 4) ຄຸ້ມຄອງ.

ໃນການແຈ້ງ ເພື່ອລົງທະບຽນ ແລະ ອອກໃບຢັ້ງຢືນການລົງທະບຽນສ້າງຕັ້ງສາຂາຂອງວິສາຫະກິດດັ່ງກ່າວ ຕ້ອງປະກອບດ້ວຍເອກະສານ ດັ່ງນີ້:

- ສຳເນົາໃບທະບຽນວິສາຫະກິດແມ່;
- ໃບມອບສິດ, ຄວາມຮັບຜິດຊອບ ລວມທັງທຶນ (ທຶນຄົງທີ່ ແລະ ທຶນໝູນວຽນ) ທີ່ວິສາຫະກິດແມ່ມອບໃຫ້ສາຂາ ເຊັນໂດຍຜູ້ອຳນວຍການ ຫລື ຜູ້ຈັດການ ຂອງວິສາຫະກິດແມ່;
- ບັນຊີຈຳນວນພະນັກງານຂອງສາຂາ ເຊັນໂດຍຜູ້ອຳນວຍການ ຫລື ຜູ້ຈັດການ ຂອງວິສາຫະກິດແມ່ ໃນນີ້ປະກອບດ້ວຍ: ຊື່ ແລະ ນາມສະກຸນ, ສັນຊາດ, ຕຳແໜ່ງ (ຖ້າເປັນຄະນະສາຂາ) ພ້ອມສຳເນົາບັດປະຈຳຕົວຂອງແຕ່ລະຄົນ, ໃນກໍລະນີຈ້າງຄົນຕ່າງປະເທດ ຕ້ອງຜ່ານຂັ້ນຕອນການພິຈາລະນາ ຕາມລະບຽບ ກົດໝາຍໃຫ້ຖືກຕ້ອງ;
- ໃບຢັ້ງຢືນທີ່ຕັ້ງສຳນັກງານສາຂາ;
- ຮູບ 3x4 ຂອງຫົວໜ້າສາຂາ 2 ໃບ (ຮູບຖ່າຍບໍ່ເກີນ 3 ເດືອນ).

ການສ້າງຕັ້ງສາຂາໃໝ່ ນອກຈາກທີ່ບົ່ງໄວ້ໃນທະບຽນວິສາຫະກິດ ຫລື ການຍຸບເລີກ ຕ້ອງສະເໜີປ່ຽນແປງເນື້ອໃນທະບຽນວິສາຫະກິດໃໝ່ ຕາມຂັ້ນຕອນທີ່ບົ່ງໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ທຸກປະການ.

ການແຈ້ງລົງທະບຽນສາຂາ ຕ້ອງເສຍຄ່າທຳນຽມ ຕາມລະບຽບການ.

ຄ. ການສ້າງຕັ້ງສາຂາຂອງວິສາຫະກິດ (ນິຕິບຸກຄົນ) ຕ່າງປະເທດ

1. ວິສາຫະກິດ (ນິຕິບຸກຄົນ) ຂອງຕ່າງປະເທດ ທີ່ດຳເນີນທຸລະກິດດ້ານ : 1) ທະນາຄານ ຫລື ສະຖາບັນການເງິນ; 2) ການປະກັນໄພ ; 3) ທີ່ປຶກສາສາກົນ ແລະ ການບິນຕ່າງປະເທດ ສາມາດຍື່ນຄຳຮ້ອງແຈ້ງຂຶ້ນ ທະບຽນວິສາຫະກິດ ສ້າງຕັ້ງສາຂາ ຢູ່ ສປປ ລາວ. ການສ້າງຕັ້ງສາຂາ ດ້ານອື່ນ ຈະປະກາດໃນລະ ບຽບການຕ່າງ ຫາກ (ເມື່ອມີຄວາມຈຳເປັນ) ;

2. ພາຍຫຼັງຂຶ້ນທະບຽນວິສາຫະກິດ ແລ້ວ ສາຂາຂອງວິສາຫະກິດ ((ນິຕິບຸກຄົນ) ຕ່າງປະເທດຕ້ອງຂຶ້ນເລກລະຫັດອາກອນ, ປະຕິບັດພັນທະ ແລະ ລະບຽບ ກົດໝາຍຕ່າງໆທີ່ກ່ຽວຂ້ອງຂອງ ສປປ ລາວ ເຊັ່ນດຽວກັບວິສາຫະກິດທົ່ວໄປ ຢ່າງເຂັ້ມງວດ ;

3. ການຍື່ນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ເພື່ອສ້າງຕັ້ງສາຂາຂອງວິສາຫະກິດ (ນິຕິບຸກຄົນ) ຕ່າງປະເທດ ຕ້ອງປະກອບດ້ວຍ :

- ຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ສ້າງຕັ້ງສາຂາ ຂອງວິສາຫະກິດ (ນິຕິບຸກຄົນ) ຕ່າງປະເທດ (ຕາມແບບຟອມລັດຕິດມາພ້ອມນີ້) ;
- ສຳເນົາໃບທະບຽນວິສາຫະກິດ - ສະບັບເປັນພາສາລາວ;
- ສຳເນົາກົດລະບຽບຂອງວິສາຫະກິດແມ່ - ສະບັບເປັນພາສາລາວ ;
- ໃບມອບສິດ ແລະ ຄວາມຮັບຜິດຊອບຂອງວິສາຫະກິດແມ່ ໃຫ້ສາຂາ - ສະບັບເປັນພາສາລາວ;

- ໃບຢັ້ງຢືນທີ່ຕັ້ງສຳນັກງານສາຂາ;
- ຮູບຫົວໜ້າສາຂາ (3X4) ຈຳນວນ 3 ໃບ (ຮູບຖ່າຍບໍ່ເກີນ 3 ເດືອນ) ;
- ເອກະສານອື່ນໆ ຕາມທີ່ຂະແໜງການກ່ຽວຂ້ອງກຳນົດ (ຖ້າມີ).

ງ. ການຈັດຕັ້ງປະຕິບັດບົດແນະນຳ

1. ໃຫ້ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ປະສານກັບພາກສ່ວນທີ່ກ່ຽວຂ້ອງຢ່າງໃກ້ຊິດ ພ້ອມທັງຊີ້ນຳພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນເມືອງ ເພື່ອພ້ອມກັນຈັດຕັ້ງປະຕິບັດ ໃຫ້ຖືກຕ້ອງຕາມລະບຽບການ ແລະ ມີປະສິດທິຜົນ;

2. ໃຫ້ບັນດາພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ກວດສອບຄືນ ບັນດາສາຂາ ທີ່ສ້າງຕັ້ງໃນໄລຍະທີ່ຜ່ານມາ ເພື່ອແນະນຳສາຂາປະຕິບັດໃຫ້ຖືກຕ້ອງ ແລະ ເຂັ້ມງວດ ຕາມບົດແນະນຳສະບັບນີ້ ກໍລະນີບໍ່ປະຕິບັດຕາມ ຫລື ມີການລະເມີດ ໃຫ້ສັ່ງໂຈະການເຄື່ອນໄຫວ ຕາມຂັ້ນຕອນຂອງກົດໝາຍ ໂດຍສະເພາະແມ່ນການແອບອ້າງຕ່າງໆ ເພື່ອສວຍໃຊ້ສາຂາ ໃຫ້ຄົນຕ່າງປະເທດເຮັດທຸລະກິດທີ່ກົດໝາຍສະຫງວນສິດສະເພາະ ຫລື ໃຫ້ເຮັດທຸລະກິດໃນບັນຊີຄວບຄຸມ ໂດຍບໍ່ຜ່ານຂັ້ນຕອນການພິຈາລະນາຂອງຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນ;

3. ໃນເວລາຈັດຕັ້ງປະຕິບັດຫາກພົບບັນຫາ ໃຫ້ລາຍງານຂໍທິດຊີ້ນຳຢ່າງເປັນປະຈຳຈາກຂັ້ນເທິງ;

4. ບົດແນະນຳສະບັບນີ້ປ່ຽນແທນ ສະບັບເລກທີ 1619/ອຄ.ທລວ, ລົງວັນທີ 28 ສິງຫາ 2013.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ສຽວສະຫວາດ ສະແຫວງສຶກສາ

ຄັດຕິດມາພ້ອມນີ້ :

- ແບບຟອມໃບສະເໜີແຈ້ງລົງທະບຽນສ້າງຕັ້ງສາຂາ;
- ແບບຟອມໃບຢັ້ງຢືນການລົງທະບຽນສ້າງຕັ້ງສາຂາ;
- ແບບຟອມຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຂອງວິສາຫະກິດ (ນິຕິບຸກຄົນຕ່າງປະເທດ).